



# ດີກາຂ່າວ

# ບຸນວັນມາຄະບູຊາ

ວັດພຸທະທັມມາຣາມ 4350 NE 133rd Ave. Portland, OR 97230

ສບັບທີ 285 ປີທີ 31 - ປະຈຳເດືອນ ກຸມພາ ປີ ພ.ສ. 2557 Volume 285 / February 2015



ຈເຣີນພອນ ທ່ານພຸທະສາສນິກຊົນທຸກຖ້ວນໜ້າ

## ກຳໜົດການບຸນ

❖ **ວັນອາທິຕ ທີ ໑ ກຸມພາ ໒໕໕໘ (Sunday; February 01, 2015) ເປັນວັນທຳບຸນຕັກບາຕ.**

- ເວລາ 09:00AM (ເຊົ້າ) ເຕົ້າໂຮມພຸທະບໍຣິສັທ ທີ່ວັດພຸທະທັມມາຣາມ.
- ເວລາ 10:00AM (ສວາຍ) ຍາທ່ານເຈົ້າອະທິການວັດ ນຳພາກ່າວຄຳນມັສະການ ເນື່ອງໃນວັນມາຄະບູຊາ, ຕໍ່ຈາກນັ້ນ ສາຣະວັຕ ນຳພາພິທີທາງສາສນາ ມີໄຫວ້ພຣະ ຮັບສີລ ພຣະສົງຄ໌ສູຕປະຣິຕະມຸງຄຸນ ຕັກບາຕ.
- ເວລາ 11:00AM (ເພນ) ຖວາຍພັຕຕາຫານເພນ ຖວາຍອັງຄ໌ອັຖະບໍຣິຂາຣແລະປັຈຈັຍສີ່ ແລ້ວຮັບພອນຈາກພຣະສົງຄ໌ ຢາດນ້ຳ ອຸທິດບຸນແກ່ປວງຍາຕ ແລະເຈົ້າກັມນາຍເວຣທົ່ວໄປ.
- ເວລາ 12:00PM (ທ່ຽງວັນ) ຟັງເທສນ໌ ຮັບພອນ ຢາດນ້ຳອີກຄັ້ງໜຶ່ງ ຮັບພົມນ້ຳພຣະພຸທະມົນຕ໌, ຫຼັງຈາກນັ້ນ ເຊີນຮັບປະທານອາຫານ ຮ່ວມກັນ ເປັນເສັດພິທີ.

**ໝາຍເຫຕ:** **1. ຂະນະທີ່ ພຣະສົງຄ໌ສັນພັຕຕາຫານເພນ - ອອກຕົນຍາຕໂຍມປະຊຸມກະກຽມບຸນພຣະເວສ.**
**2. ເວລາບ່າຍໜຶ່ງໂມງເປັນຕົ້ນໄປ ຂໍເຊີນທຸກໆທ່ານ ເຂົ້າຮ່ວມກອງປະຊຸມຫລວງປະຈຳປີນີ້.**

❖ **ວັນອັງຄານ ທີ ໓ ກຸມພາ ໒໕໕໘ (Tuesday; February 03, 2014) ກົງກັບວັນຂຶ້ນ ໑໔ ຄ່ຳ ເດືອນ ໓ ປີ ພ.ສ. ໒໕໕໘ ຊຶ່ງເປັນ ວັນມາຄະບູຊາ ແທ້ໆ.** ເວລາ 01:00PM (ບ່າຍ) ໄຫວ້ພຣະ ຮັບສີລ ວຽນທຽນຮອບສິມ ຟັງເທສນ໌ ຢາດນ້ຳ ແລະ ແຜ່ເມຕຕາ.

**ດັ່ງນັ້ນ ຈຶ່ງຂໍເຊີນ** ທ່ານພຸທະສາສນິກຊົນທຸກໆທ່ານ ຈົ່ງໄດ້ສລະເວລາອັນມີຄ່າ ມາຮ່ວມບຳເພັນມະຫາກຸສົນນຳກັນ ໃນວັນ/ເວລາ ດັ່ງກ່າວນີ້ ເພື່ອໃຫ້ເກີດຄວາມສວັສດີສີຣິມຸງຄຸນແກ່ຕົນເອງແລະຄອບຄົວ ໂດຍທົ່ວກັນເຖີ້ນ.

**ໃນໂອກາດດຽວກັນນີ້ ທາງວັດຂໍແຜ່ ອາຫານແລະນ້ຳດື່ມ ເພື່ອນຳມາສົມທົບໃນງານບຸນຄັ້ງນີ້ດ້ວຍ.**

ພອຕແລນດ໌ ອໍຣິກັນ, ວັນທີ 15 ມະກະຣາ 2015

ຂໍອຳນວຍພອນ

(ຍາທ່ານພຣະອາຈາຣມະຫາ ຄຳແສນ ກາບບົວຄຳ)

ປະທານຄນະບໍຣິຫານ ປະທານຄນະອຳນວຍການ ແລະ ເຈົ້າອະທິການວັດພຸທະທັມມາຣາມ

# ຄວາມສຳຄັນຂອງວັນມາຄະບູຊາ

**ວັນມາຄະບູຊາ** ຖືເປັນວັນສຳຄັນທີ່ສຸດອີກວັນໜຶ່ງ ທາງພຣະພຸທະສາສນາ ຫຼັງຈາກພຣະພຸທະເຈົ້າ ຕັສະຣູ້ໄດ້ເກົ້າເດືອນ ຂະນະນັ້ນ ເມື່ອພຣະພຸທະອົງຄ໌ໄດ້ຊົງທຳພຸທະກິຈ ສແດງທັມທີ່ຖ້ຳສຸກະຣະຂາຕາ ເສັດແລ້ວ ຈຶ່ງສະເດັດມາປະທັບທີ່ວັດເວລຸວັນມະຫາວິຫານ ເມືອງຣາຊະຄື ຣັຖມະຄະທະ ຊົມພູທະວີບ ປະເທດອິນເດັຽໃນປັຈຈຸບັນ **ວັນນັ້ນ ເປັນວັນທີ່ມະຫັດສະຈັນຍິ່ງໃຫຍ່** ມີເຫຕການທີ່ສຳຄັນເກີດຂຶ້ນ " ສີ່ " ປະການ ຮຽກວ່າ " ຈາຕຸຣົງຄະສັນນິບາຕ " ຄື:

- ເປັນວັນທີ່ ພຣະອະຣະຫັນຕ໌ 1,250 ອົງຄ໌ ມາປະຊຸມກັນ ທີ່ວັດເວລຸວັນມະຫາວິຫານ ຕ່າງອົງຄ໌ຕ່າງຕັ້ງໃຈມາດ້ວຍຕົນເອງ ໂດຍບໍ່ມີການນັດໝາຍກັນມາກ່ອນ.
- ພຣະສົງຄ໌ອະຣະຫັນຕ໌ເຫຼົ່ານັ້ນ ແມ່ນພຣະພຸທະເຈົ້າ ເປັນພຣະອຸປັດຊາຍ໌ ບວຊໃຫ້ດ້ວຍພຣະອົງຄ໌ເອງ ວິທີບວຊນີ້ ຮຽກວ່າ "ເອຫິພິກຂຸອຸປະສັມປະທາ".
- ວັນນັ້ນ ເປັນວັນມາຄະ ພຣະຈັນທຣ໌ເພັງໃສແຈ່ມ ແລະພຣະສົງຄ໌ທີ່ມາປະຊຸມທັງໝົດ ກໍ່ລ້ວນແຕ່ຊົງອະພິນຍາ 6 (ສແດງອິດທິຣິດໄດ້, ມີຫູທິພ, ຮູ້ວາຣະຈິຕຄົນອື່ນ, ຣະລຶກຊາຕໄດ້, ມີຕາທິພ, ຮູ້ການທຳລາຍອາສະວະກິເລສໃຫ້ສິ້ນໄປ).
- ພຣະພຸທະອົງຄ໌ ຊົງສແດງໂອວາທະປາຕິໂມກຂ໌ ຊຶ່ງເປັນຫົວໃຈຂອງພຣະພຸທະສາສນາ (ລະຊົ່ວ, ທຳດີ, ມີຈິຕຜ່ອງໃສ).

# ກິຈກັມຕ່າງໆທີ່ປະຕິບັຕໃນວັນມາຄະບູຊາ

ໃນປະເທດທີ່ນັບຖືພຣະພຸທະສາສນາ ເຊັ່ນ: ລາວ ໄທຍ ຂເມນ ພມ້າ ສີລັງກາ ແລະປະເທດອື່ນໆ ກໍ່ຈະປະຕິບັຕຕາມຮີດຄອງປະເພນີບູຮານ ທີ່ມີມາແຕ່ດັ້ງເດີມຂອງໃຜລາວ ກິຈກັມທີ່ພົບເຫັນ ສ່ວນຫຼາຍ ຄື:

- **<u>ຍາມເຊົ້າ</u>** ໄປວັດ ເພື່ອໄຫວ້ພຣະ ຮັກສາສີລ ທຳບຸນຕັກບາຕ ຖວາຍທານ ຟັງທັມ ແລະປະຕິບັຕທັມ ຕາມ**ເວລາ**ທີ່ຕົນເອງ**ສະດວກ** ຫຼື **ຕຼອດວັນ**.
- **<u>ຕອນແລງ</u>** ຕ່າງຄົນຕ່າງມີມືຖືດອກໄມ້ທູບທຽນ ໄປວຽນທຽນສາມຮອບ ຮອບເຈດີຍ໌ ຫຼື ຮອບອຸໂບສົຖ(ໂບດ) ຫຼື ຮອບອົງຄ໌ພຣະພຸທະປະຕິມາ(ພຣະພຸທະຮູປ) ເພື່ອຣະລຶກເຖິງ ພຣະພຸທະຄຸນ ທັມະຄຸນ ສັງຄະຄຸນ.

ຢູ່ປະເທດລາວ ໂດຍສະເພາະທີ່ວຽງຈັນແລະຈຳປາສັກ ມີການທຳບຸນໃນວັນມາຄະບູຊາ ຢ່າງມ່ວນຊື່ນເປັນພິເສດ, **ຢູ່ ວັດພຸທະທັມມາຣາມ ເມືອງພອຕແລນດ໌ ຣັຖອໍຣີກັນ** ພວກເຮົາ ມີຣາຍການບຸນມາຄະບູຊາ ຕາມທີ່ເຄີຍປະຕິບັຕມາທຸກປີ.

# Boun Makha Bouja



**Boun Makha Bouja is one of the most important holidays in Buddhism. It commemorates the four marvelous events occurred on this important day called Chaturongkhasannibat (These four auspicious occasions happened just nine months after the enlightenment of the Lord Buddha during the period when he was staying at Veluvana Majavihara):**

1. All enlightened monks that the Lord Buddha had previously sent abroad for disseminating Buddhism, which at the time were 1,250, came spontaneously from different places to pay homage to the Lord Buddha to hear him speak at the Veluvana Mahavihara (The first Buddhist temple).
2. All of these "Arahantas" had been ordained by the Lord Buddha himself.
3. It was the full moon day of the lunar month.
4. The Lord Buddha preached the principle in the sermon to those Arahantas called **"Ovadapatimokha."** Thus, on this day, the "**Heart of Buddhism,"** which consists of three main principles, was laid out:
   - To cease all evil doing
   - To do what is good
   - To purify one's mind.

Boun Makha Bouja or Makha Puja Day is observed throughout the whole Buddhist countries like Laos, Thailand, Cambodian, Burma, Sri Lanka, and other countries. Traditionally, on this important day, Buddhists go to the temples in the morning to pay their respects to the Buddha, receive precepts, offer food to the monks, and hear the teachings of the Buddha. After sunset: Candlelight processing called Vianthian: the monks lead Buddhist followers circumambulate clockwise three times around the ordination hall (SIM) or the temple-once for each of the jewels: the Buddha, the Dhamma, and the Sangha. Each person carries flowers, incense and a lightened candle. In Laos, the ceremonies are especially colorful such as in Vientiane and Wat Phu in Champask. In Portland Oregon, we usually have our **Agenda** as follows:

- 09:00 am: Arrival of congregation members
- 10:00 am: Abbot leads Makha Bouja Ceremony, followed by many religious activities: pay homage, receive precepts and offering food into the monk's bowl, offer lunch to the monks, lunch together, and listen to Dhamma discourse.

# ປະຊຸມຫລວງປະຈຳປີ / ຫມາຍນັດປະຊຸມ

## Annual General Assembly/Meeting Notice

**February 01, 2015**

ໃນໂອກາດບຸນມາຄະບູຊານີ້ ຈະມີກອງປະຊຸມຫລວງປະຈຳປີຂຶ້ນ ທີ່ວັດພຸທະທັມມາຣາມ. ດັ່ງນັ້ນ ຈຶ່ງຂໍເຊື້ອເຊີນ
ທ່ານສະມາຊິກວັດທຸກຖ້ວນໜ້າ ໄປຮ່ວມກອງປະຊຸມຫຼວງຄັ້ງສຳຄັນນີ້ ຕາມວັນ/ເວລາທີ່ແຈ້ງມາຂ້າງລຸ່ມນີ້ ຢ່າງພ້ອມໜ້າພ້ອມຕາ.

**<u>ກຳໜົດການປະຊຸມ</u>**

- ເຣີ້ມລົງທະບຽນ **09:00AM**
- ຣາຍງານປະຈຳປີ-ເຈົ້າອະທິການ **01:00PM**
- ເລືອກຕັ້ງທີ່ປຶກສາ **01:30PM**
- ເລືອກຕັ້ງຜູ້ກວດກາການເງິນ **01:50PM**
- ແຕ່ງຕັ້ງເຈົ້າໜ້າທີ່ບໍຣິຫານ **02:10PM**
- ກິຈທຸຣະອື່ນໆ **02:30PM**
- ປິດປະຊຸມ **03:00PM**

# ລາຍໄດ້ ແລະ ລາຍຈ່າຍຂອງບຸນປີໃໝ່ສາກົລ

(January 1, 2015)

| | | |
|---|---|---|
| ເງິນຕັກບາດ | ຈຳນວນ | $881.00 |
| ເງິນຖວາຍອົງຄ໌ອັຖະ | ຈຳນວນ | $1,731.00 |
| ເງິນບູຊາເຄື່ອງສັງຄະທານຕ່າງໆ | ຈຳນວນ | $70.00 |
| ເງິນ ໂມທະນາຕ່າງໆ | ຈຳນວນ | $310.00 |
| ເງິນຕົ້ນກາລະພຶກແມ່ຂາວມະໂນລາ ພ້ອມແມ່ຂາວ,ພໍ່ຂາວ | ຈຳນວນ | $340.00 |
| ເງິນຕົ້ນກາລະພຶກສາມັກຄີ | ຈຳນວນ | $115.00 |
| ເງິນກອງບຸນຂອງນາງຈັນສະໝອນ ສົມສະນິດ ພ້ອມຄອບຄົວ | ຈຳນວນ | $762.00 |
| ເງິນກອງບຸນຂອງນາງສຳລວນ ໄຊທອງສີ ພ້ອມຄອບຄົວ | ຈຳນວນ | $377.00 |
| ເງິນຈາກໂຕະຕລາດ ຮ້ານຄ້າ ທີ່ມາຂາຍສິນຄ້າ | ຈຳນວນ | $25.00 |
| **ຮວມລາຍໄດ້ ທັງໝົດ** | ຈຳນວນ | **$4,611.00** |
| **ລາຍຈ່າຍທີ່ເປັນເງິນສົດຈາກລາຍໄດ້** | ຈຳນວນ | **$539.83** |
| **ຈຳນວນທີ່ເຫລືອ ນຳຖວາຍເຂົ້າວັດ ທັງໝົດ** | ຈຳນວນ | **$4,071.17** |